## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 30 ມົກກະຣາ 2022 (01-30-2022)

---

### ຫລຸມຂອງການທົດລອງ

*ອາຫານຫຼືເຂົ້າໜົມອັນໃດທີ່ມັນຍາກແກ່ທ່ານທີ່ຈະອົດໄດ້?*

**ຈຸດສຳຄັນໃນບົດຮຽນ:** ການຈື່ຈຳສິ່ງທີ່ຢູ່ໃນຄວາມສ່ຽງຊ່ວຍໃຫ້ເຮົາເອົາຊະນະການລໍ້ລວງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

"ນັ້ນແມ່ນການທົດລອງແທ້ໆ." ສິ່ງທີ່ລໍ້ໃຈລອຍແວັບຂຶ້ນມາຕໍ່ໜ້າຕໍ່ຕາຂອງພວກເຮົາແລະພວກເຮົາຮູ້ສຶກຖືກຊັກຈູງໃຫ້ຕອບສນອງ. ຕ່ອນທີສອງຂອງຊັອກໂກແລັດເຄັກ. ການໂຄສະນາສຳລັບສິ່ງທີ່ເຮົາບໍ່ຕ້ອງການແລະບໍ່ສາມາດຈ່າຍໄດ້. ການທົດລອງລຽນມາທຸກແຈ.

ພວກເຮົາມັກຈະຖອຍຈາກການທົດລອງເມື່ອມີຄົນແນມຢູ່ເໜືອບ່າຂອງເຮົາແລະເວົ້າວ່າ, "ຢ່າກິນອັນນັ້ນ" ຫຼື "ເຈົ້າບໍ່ຕ້ອງການສິ່ງນັ້ນແທ້." ຜູ້ທີ່ແນມເບິ່ງເໜືອບ່າຂອງເຮົາກໍຄື: ພຣະເຈົ້າ!

ໃນການສຶກສາວັນນີ້, ໂຢເຊັບເປັນແບບຢ່າງສິ່ງທີ່ມີຄວາມໝາຍວ່າ ດຳເນີນຢູ່ກັບຄວາມຈິງໃນຄວາມຄິດ: ພຣະເຈົ້າແນມເບິ່ງທຸກການເຄື່ອນໄຫວຂອງເຮົາ. ໂຢເຊັບພະຍາຍາມຮັກສາຕົວໃຫ້ສະອາດໃນທ່າມກາງປະເພນີອັນເປິະເປື້ອນ.

ທ່ານອາດຈະບໍ່ຖືກທົດລອງແບບດຽວກັນກັບໂຢເຊັບຖືກມາ, ແຕ່<u>ທ່ານຈະຖືກການທົດລອງ.</u> ພວກເຮົາທຸກຄົນຖືກທົດລອງໝົດທຸກຄົນ. ພວກເຮົາຫຼາຍຄົນຖືກທົດລອງໃຫ້ເຮັດຜິດຕ່າງໆນາໆເຊັ່ນ: ຮັກເງິນຄຳ, ແລ້ວພະຍາຍາມຊອກຫາທາງຫຼົບຫຼີກເພື່ອເອົາຕົວລອດໃນນັ້ນ...ປູກຝັງຄວາມສັມພັນອື່ນທີ່ສາມາດທຳລາຍການສົມຣົດ...ອິດສາເພື່ອນຮ່ວມງານທີ່ປະສົບຄວາມສຳເຣັດໃຫຍ່. ວິທີການຂອງໂຢເຊັບ ຈັດການກັບການທົດລອງ ສາມາດຊ່ວຍພວກເຮົາທຸກຄົນໄດ້.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງ ຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**<u>1. ປະຖົມການ 39:1-7.</u>**

*1ໂຢເຊັບໄດ້ຖືກພາຕົວມາຮອດປະເທດເອຢິບ ພວກອິດຊະມາເອນຜູ້ທີ່ໄດ້ຊື້ລາວມາກໍຂາຍໂຢເຊັບຕໍ່ໃຫ້ຊາວເອຢິບຊື່ ໂປຕີຟາ*
*ຊຶ່ງເປັນນາຍທະຫານ ທີ່ຮັກສາພຣະຣາຊວັງຂອງຟາຣາໂອ. 2ພຣະຜູ້ເປັນເຈົ້າໄດ້ຊ່ອຍໂຢເຊັບ ໂດຍບັນດານທຸກສິ່ງທຸກຢ່າງ*
*ໃຫ້ເກີດເປັນຜົນດີແກ່ລາວ ລາວໄດ້ອາສັຍຢູ່ເຮືອນຂອງໂປຕີຟາ ນາຍຂອງລາວ. 3ເມື່ອໂປຕີຟາເຫັນວ່າພຣະຜູ້ເປັນເຈົ້າຊົງ*
*ຊ່ອຍໂຢເຊັບ ໂດຍຊົງໃຫ້ທຸກສິ່ງທຸກຢ່າງທີ່ລາວເຮັດເກີດເປັນຜົນສຳເລັດ.4ເພິ່ນຈຶ່ງພໍໃຈກັບວຽກການທີ່ໂຢເຊັບໄດ້ເຮັດ ດັ່ງນັ້ນ*
*ເພິ່ນຈຶ່ງມອບເຮືອນ ແລະທຸກສິ່ງທີ່ເພິ່ນມີໃຫ້ລາວເບິ່ງແຍງ ແລະ ຮັບຜິດຊອບ. 5ຍ້ອນໂຢເຊັບ ພຣະຜູ້ເປັນເຈົ້າຈຶ່ງຊົງອວຍ-*
*ພອນເຮືອນຫລັງນັ້ນ ພຣະອົງຊົງອວຍພອນໃຫ້ທຸກສິ່ງທຸກຢ່າງທີ່ໂປຕີຟາມີໃນເຮືອນ ແລະໃນທົ່ງນາຈະເລີນຂຶ້ນ. 6ກໍເພາະ-*
*ວ່າໂປຕີຟາໄດ້ມອບຊັບສິ່ງຂອງທຸກຢ່າງໃຫ້ໂຢເຊັບເບິ່ງແຍງຮັກສາແທນ ສະນັ້ນເພິ່ນຈຶ່ງບໍ່ໄດ້ມີຄວາມກັງວົນສົນໃຈຫຍັງເລີຍ*
*ເວັ້ນໄວ້ແຕ່ອາຫານປະຈຳວັນເທົ່ານັ້ນ. ໂຢເຊັບເປັນຊາຍໜຸ່ມທີ່ມີຮູບຮ່າງສົມສ່ວນ ແລະມີໜ້າຕາງາມ. 7ຫລັງຈາກນັ້ນມາບໍ່*

*ເທື່ອເທົ່າໃດເມັຽຂອງໂປຕີຟາກໍສືບໃຈແລະເກີດສເນຫາໃນຕົວຂອງໂຢເຊັບ ນາງຈຶ່ງເວົ້າກັບລາວວ່າ,"ມານອນນຳຂ້ອຍເທາະ."*

ຕອນທ້າຍຂອງບົດກ່ອນນີ້, ໂຢເຊັບຖືກພາຕົວໄປເອຢິບດ້ວຍຄວາມເຈັບໃຈ. ຖືກປະຕິເສດແລະຖືກຂາຍໄປເປັນທາດດ້ວຍອ້າຍຂອງລາວເອງ, ລາວເຫຼືອພຽງຄວາມຫວັງໜ້ອຍດຽວໃນຄວາມຝັນທີ່ລາວໄດ້ເລົ່າມານັ້ນອາດກາຍເປັນຈິງ. ແທນທີ່ຈະເດືອດຮ້ອນຢູ່ກັບຄວາມໂກດ ແລະຊອກຫາທາງແກ້ແຄ້ນ, ເຖິງຢ່າງໃດກໍຕາມ, ລາວເລືອກທີ່ຈະຊື່ນບານໃນບ່ອນທີ່ລາວຖືກວາງແຜນໄວ້ ແລະວາງໃຈພຣະເຈົ້າທີ່ຈະເຫັນລາວຜ່ານໄປ. ຂນະທີ່ລາວໄດ້ປະສົບຄວາມສຳເຣັດມາແລ້ວ, ລາວຍັງຈະປະເຊີນການທົດລອງ ແລະການທ້າຍທາຍໃໝ່ອີກຕື່ມ.

*ມີພັຍອັນຕະຣາຍຫຍັງແດ່ທີ່ເຮົາຈະປະເຊີນເວລາສິ່ງຕ່າງໆດຳເນີນໄປດ້ວຍດີແກ່ເຮົາ?*

ເຖິງແມ່ນສະຖານະການຂອງໂຢເຊັບຈະມືມາກມາຍ, ພຣະເຈົ້າຍັງທຳງານໃນຊີວິດຂອງລາວຢູ່. ພຣະເຈົ້າເອງເປັນນັກຮົບຕໍ່ສູ້ໃນການສູ້ຮົບຂອງໂຢເຊັບ. ຊາຍໜຸ່ມບໍ່ສາມາດທວງຜົນງານທີ່ລາວສຳເຣັດຕໍ່ເນື່ອງມາ. ນອກເໜືອຈາກວຽກດີຂອງໂຢເຊັບແລ້ວ, ລາວຍັງໄດ້ຮັບພອນດ້ວຍການເບິ່ງແຍງດີຕື່ມອີກ. "ໂຢເຊັບເປັນຄົນຖືກລ້ຽງມາດີແລະຮູບງາມ." ລາວອາດຈະໄດ້ຈາກແມ່ຂອງລາວ ຍ້ອນວ່າຄຳບັລຍາຍຄ້າຍຄືກັນ ຖືກນຳໃຊ້ບັລຍາຍຣາເຊັນ (ປຖກ 29:17). ສະນັ້ນ, ເປັນຫຍັງຜູ້ຂຽນພຣະຄັມພີຈຶ່ງໄດ້ບັນຈຸລາຍລະອຽດນີ້ໃນການພັລນາການໄດ້ປຽບໃນຊີວິດຂອງໂຢເຊັບ? ຄຳຕອບຢ່າງຊັດເຈນລຽນແຖວໃນຫຼຸມຊຶ່ງມາພ້ອມກັບຄວາມສຳເຣັດ. ຊາຍໜຸ່ມຜູ້ນີ້ມີພຣະຫັດພຣະເຈົ້າຢູ່ນຳລາວ, ແລະລາວມີໜ້າຕາທີ່ເປັນເຫດໃຫ້ຫ້ອງແອອັດເພື່ອແບ່ງແຍກຄືກັນກັບທະເລແດງ! ເຖິງຢ່າງໃດກໍຕາມ, ພຣະພອນເຫຼົ່ານີ້ຍັງສາມາດນຳມາຊຶ່ງການທ້າທາຍ ແລະການທົດລອງ. ຢ່າງໜ້ອຍການທົດລອງຢ່າງນຶ່ງມາທາງພັລຍາຂອງທ່ານໂປຕີຟາ. ນາງໄດ້ປັກຕາເບິ່ງໂຢເຊັບ, ແລະ ນາງອາດເຄີຍໄດ້ສິ່ງທີ່ນາງຢາກໄດ້ມາກ່ອນແລ້ວ. ໂຢເຊັບຈະເສັຽສະລະຄວາມສັດຊື່ຂອງລາວເພື່ອຄວາມສຸກຊົ່ວຄາວທີ່ນາງຢິບຍື່ນໃຫ້ບໍ່? ການຕັດສິນໃຈໃນຊົ່ວຂນະນັ້ນສາມາດຊີ້ຊະຕາຊີວິດຂອງລາວຕລອດໄປ.

ໂຢເຊັບຕ້ອງໄດ້ຕອບແທນຂໍ້ສເນີຂອງພັລຍາໂປຕີຟາ, ຫຼັງຈາກນັ້ນ, ລາວຖືກພາຕົວພັດພາກຈາກຄອບຄົວແລະປະເທດຂອງລາວ; ດຽວນີ້ລາວກາຍເປັນຂ້າທາດຊຶ່ງຫຼາຍຄົນອາດຄິດວ່າລາວສົມຄວນໄດ້ຮັບສິ່ງຕອບແທນທຸກສິ່ງທີ່ເກີດຂຶ້ນກັບລາວ. ແຕ່ ພວກເຮົາຈະເຫັນວ່າໂຢເຊັບໄດ້ເລືອກທາງທີ່ແຕກຕ່າງ.

## 2. ປະຖົມການ 39:8-10.

*8 ໂຢເຊັບປະຕິເສດ ແລະຕອບນາງວ່າ, "ນາຍຂອງຂ້ານ້ອຍເພິ່ນບໍ່ໄດ້ກັງວົນສົນໃຈນຳສິ່ງໜຶ່ງສິ່ງໃດເລີຍຢູ່ໃນເຮືອນນີ້ກໍຍ້ອນເພິ່ນໄວ້ເນື້ອເຊື່ອໃຈຂ້ານ້ອຍ. 9 ເພິ່ນໄດ້ໃຫ້ຂ້ານ້ອຍຮັບຜິດຊອບໃນສິ່ງທີ່ເພິ່ນມີ ຂ້ານ້ອຍມີອຳນາດໃນເຮືອນຫລັງນີ້ເທົ່າກັນກັບເພິ່ນ ເພິ່ນບໍ່ເຄີຍຫວງຫ້າມຂ້ານ້ອຍໃນການກະທຳໃດເລີຍ ເວັ້ນໄວ້ແຕ່ຍານາງທີ່ເປັນເມັຽຂອງເພິ່ນ ຂ້ານ້ອຍຈະກ້າເຮັດຜິດປະເວນີ ແລະເຮັດສິ່ງທີ່ຊົ່ວຊ້າຢ່າງນີ້ຕໍ່ໜ້າພຣະເຈົ້າໄດ້ຢ່າງໃດ." 10 ເຖິງແມ່ນນາງຈະຂໍຮ້ອງໂຢເຊັບມື້ແລ້ວມື້ອີກໃຫ້ໄປນອນກັບນາງ ແຕ່ໂຢເຊັບກໍບໍ່ຍອມຟັງ.*

ອາດາມແລະເອວາປະເຊີນກັບໝາກໄມ້ທີ່ຫວງຫ້າມໃນສວນເອເດັນ, ແລະດຽວນີ້ໂຢເຊັບປະເຊີນກັບໝາກໄມ້ທີ່ຫວງຫ້າມຂອງລາວເອງ: ພັລຍາຂອງຜູ້ມີອຳນາດ! ໂຢເຊັບບໍ່ອາດຮັບເຫຍື່ອລໍ້ນັ້ນໄດ້, ເຖິງຢ່າງໃດກໍຕາມ; ຄວາມຈິງ, ລາວພະຍາຍາມເວົ້າຄວາມຮູ້ສຶກກັບຍິງໄຮ້ສິລທັມຄົນນັ້ນ, ຮຽກຮ້ອງໃຫ້ເອົາໃຈໃສ່ກັບພອນທີ່ຜົວຂອງນາງມອບໃຫ້. ນາງອອກນອກເກີນຂອບເຂດແລ້ວ, ແລະໂຢເຊັບຊາບດີ. ໂຢເຊັບກໍໄດ້ເຕືອນນາງວ່າເປັນຫຍັງຈຶ່ງລ້ຳເສັ້ນ: "ເຈົ້າເປັນເມັຽຂອງເພິ່ນ." ນາງເປັນ "ໝາກ

ໄມ້ຫວງຫ້າມ" ຊຶ່ງລາວບໍ່ຄວນ-ບໍ່ຕ້ອງ-ຄວ້າເອົາ. ລາວຮູ້ວ່າສິ່ງໃດຢູ່ໃນຄວາມສ່ຽງ, ແລະການຂະຍັບທີ່ຜິດໝາຍເຖິງພັຍວິບັດ. ໂຢເຊັບປະຕິເສດທີ່ຈະຕົກຢູ່ພາຍໃຕ້ອຸບາຍຂອງນາງ ແລະ ກໍປ້ອງກັນຕົວເອງຈາກລູກສອນຂອງນາງ.

ໂຢເຊັບໄດ້ລວບລວມພະລັງພາຍໃນເພື່ອປະຕິເສດຢ່າງໃດ? ລາວຢືນຢັດຢູ່ໄດ້ຢ່າງໃດໃນເມື່ອຊາຍອື່ນຫຼາຍຄົນຕົກໄປໃນບ້ວງແຮ້ວຂອງການທົດລອງທາງເພດ? <u>"ຄວາມລັບ" ຂອງໂຢເຊັບແມ່ນລາວໄດ້ຕັດສິນໃຈມານານແລ້ວ ກ່ອນອັນນັ້ນ-ການຕັດສິນໃຈຕິດຕາມພຣະເຈົ້າເໜືອກວ່າທຸກສິ່ງ.</u> ລາວກໍານົດໄວ້ກ່ອນແລ້ວວ່າໃຫ້ຊີວິດຂອງລາວເປັນທີ່ພໍພຣະທັຍພຣະເຈົ້າ. ສິ່ງທີ່ຢູ່ໃນໃຈຂອງໂຢເຊັບບໍ່ແມ່ນວ່າໂປຕີຟາຈະຕອບໂຕ້ແນວໃດ, ແຕ່ ແມ່ນວ່າພຣະເຈົ້າຈະເຮັດແນວໃດ.

ເວລາການທົດລອງເຂົ້າມາ, ມັນເປັນໄປບໍ່ໄດ້ທີ່ຈະຫຼີກເວັ້ນທຸກຮູບພາບທີ່ໂລກນໍາມາສູ່ສາຍຕາເຮົາ. ແຕ່ພວກເຮົາບໍ່ຕ້ອງເບິ່ງການທົດລອງທາງເພດ; ພວກເຮົາຖືກທົດລອງໃນຫຼາຍທາງ. ການຮັກສາສະຕິຮູ້ສຶກຜິດຊອບເປັນສິ່ງສໍາຄັນຕໍ່ຊີວິດ. <u>ໂຢເຊັບ ອຸທິດຕົນຮັກສາຊີວິດແລະສະຕິຮູ້ສຶກຮັບຜິດຊອບຂອງລາວໃຫ້ບໍຣິສຸດ ແລະເຮົາກໍຕ້ອງເປັນຄົນເຊັ່ນນັ້ນເໝືອນກັນ.</u>

ຄຣິສຕຽນຫຼາຍຄົນດໍາເນີນຊີວິດຄືກັບວ່າ ເຂົາຈະບໍ່ປະສົບກັບການທົດລອງແລະຕັດສິນລົງໂທດຈັກເທື່ອ. ເຂົາຄິດວ່າເຂົາມີພູມຕ້ານທານຕໍ່ການໂຈມຕີຂອງສັດຕູ. ນີ້ບໍ່ແມ່ນຄວາມເປັນຈິງ. ໜ້າເສົ້າໃຈ, ກະສັດດາວິດສາມາດໃຫ້ການເຣື່ອງນີ້. ພຣະອົງເປັນຄົນປະສົບຜົນສໍາເຣັດໃນລະດູການຂອງຊີວິດໃນເວລາພຣະອົງແກ້ເຄື່ອງປ້ອງກັນຕົວອອກແລະເຮັດບາບຕໍ່ສູ້ພຣະເຈົ້າ. ດາວິດໄດ້ເຂົ້າໄປໃນການທົດລອງກັບເມັຽຂອງຄົນອື່ນ, ໄດ້ຍຶດເອົາຄວາມສນຸກສນານຊົ່ວຄາວເໜືອຄວາມບໍຣິສຸດແລະສັງຫານຊີວິດຄົນຈໍານວນຫຼາຍໃນຂັ້ນຕອນຕ່າງໆ (2 ຊມອ 11).

ມີຄົນຫຼາຍຈົນນັບບໍ່ຖ້ວນໄດ້ກະທໍາຜິດຢ່າງດຽວກັນ. ມີພຣະຄຸນສໍາລັບຄວາມຫຼົ້ມເຫຼວຂອງເຮົາບໍ່? ມີແນ່ນອນ. ແຕ່ຜົນກັມຕາມສນອງອາດເຈັບປວດຫຼາຍ. ແນວທາງທີ່ສລາດຄືການຕັດສິນໃຈລ່ວງໜ້າວ່າ ທ່ານຈະເຮັດຢ່າງໃດເມື່ອການທົດລອງປາກົດຂຶ້ນ. ພຣະທັມພຣະເຈົ້າຈັດຫາການນໍາພາໃຫ້. ຈົ່ງວາງມາຕຖານຂອງທ່ານໃຫ້ສູງ, ແລະ ໃຫ້ຄໍາໝັ້ນສັນຍາຕໍ່ສິ່ງເຫຼົ່ານັ້ນດຽວນີ້. ຄືກັນກັບໂຢເຊັບ, ລະດູການຂະຫຍາຍຄວາມເຊື່ອຂອງທ່ານ ໄດ້ຈັດໃສ່ຕາຕລາງໄວ້ແລ້ວ, ແຕ່ຈົ່ງແກ້ໄຂດ້ວຍການວາງໃຈໃນພຣະເຈົ້າຢ່າງກ້າຫານ.

*ທ່ານອີງໃສ່ຄວາມເຊື່ອໝັ້ນໃນການເຊື່ອຖືອັນໃດທີ່ທ່ານຮຽນຮູ້ໃນລະຫວ່າງການທົດລອງ?*

## <u>3. ປະຖົມການ 39:11-12.</u>

*11 ຕໍ່ມາມື້ນຶ່ງ ເມື່ອໂຢເຊັບເຂົ້າໄປເຮັດວຽກໃນເຮືອນຂອງນາຍ ຊຶ່ງມື້ນັ້ນບໍ່ມີຄົນໃຊ້ຈັກຄົນຢູ່ໃນເຮືອນເລີຍ. 12 ເມັຽຂອງນາຍຈຶ່ງສວຍໂອກາດນັ້ນຈ່ອງເສື້ອຂອງລາວໄວ້ແລ້ວເວົ້າວ່າ, "ໄປນອນກັບຂ້ອຍເທາະ" ແຕ່ໂຢເຊັບພະຍາຍາມເອົາຕົວລອດຫລົບໜີອອກໄປຂ້າງນອກ ໂດຍປະເສື້ອນອກໄວ້ຄາມືຂອງນາງ.*

ໂຢເຊັບອາດເຄີຍເປັນຂ້າທາດ, ແຕ່ລາວດໍາເນີນຊີວິດ ແລະເຮັດວຽກໃນຕໍາແໜ່ງໜ້າທີ່ໜ້າອິດສາຖານະຂ້າທາດ. ເຖິງຢ່າງໃດກໍຕາມ, ເມື່ອພັລຍາຂອງໂປຕີຟາຈັບໂຢເຊັບໄວ້, ລາວຮູ້ວ່າສະພາບການຂອງລາວຈົບທັນທີ ຖ້າລາວບໍ່ຫຼົບໜີອອກນອກປະຕູ. ນາງໄດ້ໃຊ້ຂໍ້ສເນີທີ່ເຄີຍເຮັດມາກ່ອນ-ຄວາມຈິງ, "ວັນແລ້ວວັນເຫຼົ່າ" (ຂໍ້ 10)-ແຕ່ບາງທີຄົນອື່ນອາດຢູ່ໃນເຮືອນໃນໂອກາດເຫຼົ່ານັ້ນ. ມັນປາກົດວ່າໂອກາດນີ້ແຕກຕ່າງກັນ, ດັ່ງນັ້ນໂຢເຊັບຮູ້ສຶກວ່າມີທາງເລືອກດຽວຄື: ແລ່ນ! ໃນຊ່ວງທີ່ຖືກຄຸກຄາມ, ເສື້ອຄຸມຂອງລາວໄດ້ຖືກກະຊາກອອກຈາກຮ່າງກາຍຂອງລາວ, ແລະຫຼົບໜີເພື່ອຄວາມປອດພັຍ, "ໂດຍປະເສື້ອນອກໄວ້ຄາມືຂອງນາງ." ໂຢເຊັບຫຼົບໜີຈາກການຜິດສິລທັມ.

*ຄໍາຕົວະອັນໃດທີ່ຈະກີດກັນເຮົາຈາກການທົດລອງ?*

ທາງກົງກັນຂ້າມທ່ານໂປໂລອາດເຄີຍມີເຣື່ອງນີ້ໃນຄວາມຄິດຫຼາຍສະຕະວັດຕໍ່ມາເມື່ອເພິ່ນທ້າທາຍການດຳເນີນຊີວິດແບບລະຫຼວມຂອງຄຣິສຕະຈັກໂກຣິນໂທວ່າ: *[18]ຈົ່ງຫລີກໜີເສັຽຈາກການຫລິ້ນຊູ້ ຜິດບາບທຸກຢ່າງທີ່ມະນຸດເຮັດນັ້ນເປັນບາບນອກກາຍແຕ່ຜູ້ທີ່ຫລິ້ນຊູ້ນັ້ນກໍ່ຜິດບາບຕໍ່ຮ່າງກາຍຂອງຕົນເອງ (1ກຣທ 6:18).* ພວກທີ່ຕົກຢູ່ໃນການຜິດສິລທັມທາງເພດຈະຕ້ອງໄດ້ຈັດການກັບກະເປົາທີ່ຕິດມານຳ. ນີ້ຄືເຫດຜົນທີ່ໂຢເຊັບຍົກຮູບພາບທີ່ຊັດແຈ້ງຂອງຄຣິສຕຽນສນອງຕອບຕໍ່ຮູບພາບລາມົກ, ການຫຼີ້ນຊູ້, ແລະ ຄວາມໂລບທຸກຮູບແບບ. ຄວາມບາບນ້ອຍນຳສູ່ຄວາມບາບໃຫຍ່, ສະນັ້ນ ຈົ່ງແລ່ນໜີຈາກກົນອຸບາຍທຳອິດຂອງມັນດັ່ງທີ່ໂຢເຊັບໄດ້ກະທຳ.

ການແລ່ນໜີຈາກການທົດລອງເປັນຂໍກຸນແຈສູ່ການເອົາຕົວລອດຂອງເຮົາ ໃນເວລາປະເຊີນກັບສົງຄາມຝ່າຍວິນຍານ. ຖ້າພວກເຮົາສຸມໃສ່ຫົວຂໍ້ນີ້ຫຼາຍເກີນໄປ, ພວກເຮົາອາດສູນເສັຽປ່າໄມ້ສຳລັບຕົ້ນໄມ້. ສິ່ງສຳຄັນກວ່າການແລ່ນໜີຈາກຄວາມບາບແມ່ນການຕັດສິນໃຈເດີນໃກ້ສິດກັບພຣະເຢຊູ. ພຣະເຢຊູສະເດັດມາໃນໂລກ ເພື່ອພວກເຮົາສາມາດຍ່າງໃກ້ສິດກັບພຣະອົງ. ດັ່ງທີ່ພຣະເຢຊູໄດ້ຈັດຕຽມໃຫ້ສຳເຣັດໜ້າທີ່ ທີ່ພຣະອົງສະເດັດມາ-ເປັນເຄື່ອງບູຊາເພື່ອຄວາມລອດພົ້ນຂອງເຮົາ-ພຣະອົງໄດ້ຮັບປະກັນແກ່ພວກສາວົກຂອງພຣະອົງວ່າ ການສະເດັດເມືອຂອງພຣະອົງ ໝາຍເຖິງການສະເດັດມາຂອງພຣະວິນຍານບໍຣິສຸດ-ແລະ ສິ່ງນີ້ຈະພິສູດໃຫ້ເຫັນວ່າຈະດີຂຶ້ນກວ່າເກົ່າຫຼາຍ. ພຣະເຈົ້າຊົງຢູ່ນຳເຮົາທຸກເວລາ, ແລະພຣະວິນຍານບໍຣິສຸດຈະນຳເຮົາໄປສູ່ຄວາມຈິງ. ພວກເຮົາບໍ່ຄວນສຸມໃສ່ແຕ່ສິ່ງທີ່ເຮົາຈະຫຼົບໜີ ແຕ່ຄວນສຸມໃສ່ສິ່ງທີ່ເຮົາແລ່ນໄປຫາ. ການສແວງຫາພຣະເຈົ້າເປັນເປົ້າໝາຍທີ່ໜ້າສົນໃຈຫຼາຍກວ່າການຫຼີກໜີບາບ.

*ມີຍຸດທະວິທີຫຍັງແດ່ທ່ານພົບວ່າເປັນປໂຍດໃນການເອົາຊະນະການທົດລອງ?*

## ນຳໃຊ້ໃນຊີວິດ

ຈົ່ງຈື່ຈຳສິ່ງທີ່ຢູ່ໃນຄວາມສ່ຽງທີ່ຊ່ອຍໃຫ້ພວກເຮົາເອົາຊະນະການທົດລອງ. ຈົ່ງເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງມີຫຸ້ນສ່ວນ.** ທ່ານພົບວ່າຍາກບໍ່ທີ່ຈະຍ່າງອອກຈາກການທົດລອງໃດນຶ່ງ? ຈົ່ງວອນຂໍໃຫ້ພຣະເຈົ້າຊ່ອຍວາງແຜນເພື່ອຕໍ່ສູ້ກັບການທົດລອງຊ້ຳແລ້ວຊ້ຳເຫຼົ່ານັ້ນໃນຊີວິດຂອງທ່ານ.
- **ຈົ່ງຕັ້ງກຸ່ມ.** ບາງຄັ້ງຂອງປະທານທີ່ດີທີ່ສຸດທີ່ພຣະເຈົ້າສາມາດປະທານແກ່ເຮົາໃນພາວະປະເຊີນກັບການທົດລອງແມ່ນເພື່ອນໃນພຣະເຈົ້າ. ຈົ່ງອອກໄປຫາໝູ່ຜູ້ນຶ່ງໃນອາທິດນີ້ແລະຖາມໃຫ້ລາວຊ່ອຍຮັບຜິດຊອບຕໍ່ການທົດລອງສະເພາະໃດນຶ່ງທີ່ທ່ານພະຍາຍາມຫຼີກລ້ຽງ.
- **ຈົ່ງເລີ້ມຖືສິນອົດອາຫານ.** ທາງນຶ່ງທີ່ຈະຊ່ອຍເອົາຊະນະການທົດລອງແມ່ນການຝຶກຄວາມຄິດຂອງເຮົາ ໂດຍໃຊ້ວິນັຍຝ່າຍວິນຍານເຊັ່ນການຖືສິນອົດອາຫານ. ອາທິດນີ້ຈົ່ງເລືອກສລະເວລາເບິ່ງໂທຣະທັດໃຫ້ເປັນການອຸທິດຕົນຄື ການອ່ານ, ການເສີມສ້າງສາຍສັມພັນ, ຫຼືການຍ່າງອະທິຖານ.

ຂນະທີ່ເຮົາເວົ້າວ່າບໍ່ ຕໍ່ການທົດລອງນ້ອຍໆ, ພວກເຮົາເຕີບໃຫຍ່ໃນຄວາມສາມາດເວົ້າວ່າບໍ່ ຕໍ່ການທົດລອງໃຫຍ່ໆເໝືອນກັນ. ຈົ່ງເວົ້າວ່າບໍ່ຕໍ່ເນື້ອໜັງ ແລະ ສແວງຫາພຣະວິນຍານບໍຣິສຸດ ຊຶ່ງພວກເຮົາສາມາດເຕີບໃຫຍ່ໃກ້ສິດກັບພຣະຄຣິດຫຼາຍຂຶ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ https://ulsb.org/sunday-school-2/ ແປໂດຍ PSI**